# “BCEL” ຮ່ວມມືກັບ “UPI ສາກົນ” ໃຫ້ການບໍລິການຮັບຊໍາລະສະສາງຜ່ານ QR Code UnionPay ຄັ້ງທໍາອິດໃນ ສປປ ລາວ ໝູນຮ້ານຄ້າລາວຮັບລູກຄ້າຄົນຈີນເພີ່ມຂຶ້ນ!

ໃນຕອນບ່າຍຂອງວັນສຸກ ວັນທີ 13 ກັນຍາ 2019, ໄດ້ມີພິທີເປີດໂຕການບໍລິການຮັບຊໍາລະ QR Code UnionPay ຢ່າງເປັນທາງການ ຢູ່ທີ່ ໂຮງແຮມດອນຈັນ ພາເລດ ນະຄອນຫຼວງວຽງຈັນ ໃຫ້ກຽດເປີດພິທີໃນຄັ້ງນີ້ໂດຍ ທ່ານ ພູຂົງ ຈັນທະຈັກ ຜູ້ອໍານວຍການໃຫຍ່ BCEL ແລະ ທ່ານ ວິນເຊັນ ລິງ ຮອງຜູ້ອໍານວຍການໃຫຍ່ ຢູນຽນເພສາກົນ ປະຈໍາພາກພື້ນອາຊີຕາເວັນອອກສ່ຽງໃຕ້, ເປັນກຽດເຂົ້າຮ່ວມໂດຍ ທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງ ສປປລາວ, ປອ ບຸນເຫຼືອ ສິນໄຊວໍຣະວົງ ປະທານສະພາບໍລິຫານ ທຄຕລ ແລະ ທ່ານ ສຸລິສັກ ທໍານຸວົງ ວ່າການຫົວໜ້າກົມຄຸ້ມຄອງລະບົບຊໍາລະສະສາງ ທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍບັນດາຄະນະກົມ, ຄະນະພະແນກທີ່ກ່ຽວຂ້ອງຈາກທະນາຄານແຫ່ງ ສປປ ລາວ, ທ່ານທູດຈີນ, ຕາງໜ້າສະມາຄົມການຄ້າຈີນ, ກະຊວງແຜນການ ແລະ ການລົງທຶນ, ກະຊວງວັດທະນະທໍາ ແລະ ການທ່ອງທ່ຽວ, ອົງການທ່ອງທ່ຽວລາວ, ບໍລິສັດທ່ອງທ່ຽວ, ບັນດາລູກຄ້າຂອງ ທຄຕລ, ບໍລິສັດໃນເຄືອ ທຄຕລ, ຄະນະອໍານວຍການ, ຄະນະພະແນກ, ສູນ ແລະ ສາຂາ ຕະຫຼອດຮອດພະນັກງານຂອງ ທຄຕລ ພາຍໃນນະຄອນຫຼວງວຽງຈັນ ພ້ອມດ້ວຍສື່ມວນຊົນຈາກຫຼາຍພາກສ່ວນກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.




ຮູບພາບ1: ພາບບັນຍາກາດພິທີເປີດໂຕການບໍລິການຮັບຊໍາລະ QR Code UnionPay ຢ່າງເປັນທາງການ” 13/09/2019 ທີ່ໂຮງແຮມດອນຈັນພາເລດ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຫຼື **“BCEL”** ແລະ UnionPay International ຫຼື **“UPI ສາກົນ”** ແມ່ນໄດ້ມີການຮ່ວມມືທີ່ດີຕໍ່ກັນທາງທຸລະກິດມາຫຼາຍກວ່າ 10 ປີ ເລີ່ມຈາກການຮ່ວມມືກັນອອກບັດເອທີເອັມຢູນຽນເພ, ບັດນັກສຶກສາ, ບັດເຄຣດິດຢູນຽນເພໂຄຣແບນ ກ້າວເຖິງການອັບເດດຕູ້ເອທີເອັມໃຫ້ສາມາດຮັບບໍລິການບັດຊິບຢູນຽນເພ ແລະ ການອັບເດດເຄື່ອງຮັບບັດໃຫ້ສາມາດຮັບບັດຢູນຽນເພໃນຂົງເຂດທົ່ວປະເທດ. ສະນັ້ນ; ເພື່ອສືບຕໍ່ພັດທະນາການບໍລິການໃຫ້ຮອງຮັບກັບການຂະຫຍາຍຕົວຂອງເທັກໂນໂລຢີທາງການເງິນ FinTech ທີ່ມີແນວໂນ້ມຂະຫຍາຍຕົວນັບມື້ນັບສູງຂຶ້ນ.ໃນຄັ້ງນີ້ ***BCEL ແລະ UPI ສາກົນ ຈຶ່ງໄດ້ຈັບມືກັນໃຫ້ການບໍລິການຮັບຊໍາລະສະສາງ ດ້ວຍ QR Code UnionPay ເປັນຄັ້ງທໍາອິດໃນ ສປປ ລາວ.***

BCEL ເປັນທະນາຄານທໍາອິດທີ່ນໍາເອົາເຕັກໂນໂລຢີການຊໍາລະເງິນດ້ວຍ QR Code ເຂົ້າມາໃຫ້ບໍລິການໃນ ສປປ ລາວ ເຊິ່ງເປັນທີ່ຮູ້ຈັກກັນດີ ໄດ້ຮັບຄວາມນິຍົມຫຼາຍທົ່ວປະເທດ ສໍາລັບ App OnePay ແລະ UPI ສາກົນ ກໍ່ເປັນຜູ້ໃຫ້ບໍລິການທໍາອິດ ທໍາອິດທີ່ເປີດໃຫ້ບໍລິການຊໍາ

ລະສະສາງດ້ວຍ QR Code ໃນບັນດາປະເທດອາຊີຕາເວັນອອກສ່ຽງໃຕ້. ປະຈຸບັນຜູ້ໃຊ້ແອັບມືຖືຢູນຽນເພ (UnionPay App) ສາມາດໃຊ້ບໍລິການຊຳລະຜ່ານມືຖືໄດ້ຫຼາຍກວ່າ 11 ລ້ານຮ້ານຄ້າ ທັງພາຍໃນຈີນ ແລະ ອີກ 32 ປະເທດ. ສະນັ້ນ; ເພື່ອນຳມາດຕະຖານສາກົນມາໃຊ້ໃຫ້ເກີດປະໂຫຍດຮ່ວມກັນ ຍົກລະດັບການບໍລິການຊຳລະສະສາງລະຫວ່າງປະເທດດ້ວຍລະບົບທັນສະໄໝ ເຮັດໃຫ້ການພັດທະນາການເຊື່ອມໂຍງລະບົບການເງິນລາວ ແລະ ຈີນໄດ້ງ່າຍ ແລະ ວ່ອງໄວ ເພີ່ມຊ່ອງທາງການຊຳລະເງິນທີ່ສະດວກ ປອດໄພ ດ້ວຍຕົ້ນທຶນທີ່ຕ່ຳ ແລະ ສາມາດຕອບສະໜອງຄວາມຕ້ອງການຂອງລູກຄ້າໂດຍສະເພາະແມ່ນກຸ່ມລູກຄ້າທີ່ນຳໃຊ້ UnionPay QR. ສະນັ້ນ; **BCEL ແລະ UPI ສາກົນ** ຈຶ່ງໄດ້ຮ່ວມມືກັນເປີດໃຫ້ການບໍລິການຮັບຊຳລະສະສາງ ດ້ວຍ QR Code UnionPay ເຊິ່ງຮ້ານຄ້າສະມາຊິກ QR Code ຂອງ BCEL ນອກຈາກຈະສາມາດຮັບບໍລິການຊຳລະສະສາງຈາກ **BCEL OnePay** ໄດ້ແລ້ວຍັງສາມາດຮັບຊຳລະສະສາງຈາກລູກຄ້າຄົນຈີນທີ່ມີແອັບມືຖື **UnionPay App** ໄດ້ອີກດ້ວຍ.

ການເປີດໃຫ້ບໍລິການນີ້ແມ່ນຈະຊ່ວຍໃຫ້ຜູ້ໃຊ້ UnionPay App ໂດຍສະເພາະແມ່ນຄົນຈີນ ສາມາດຈ່າຍເງິນຊຳລະຄ່າສິນຄ້າ ແລະ ບໍລິການໃນປະເທດລາວ ແບບຮຽວທາມ໌ “Real Time” ໄດ້ຕະຫຼອດເວລາ ໂດຍການສະແກນ QR Code ຢູ່ຮ້ານຄ້າຕ່າງໆໃນລາວ ດ້ວຍລະບົບທີ່ທັນສະໄໝ ພາຍໃຕ້ມາດຕະຖານ ແລະ ຄວາມປອດໄພສູງ ຈາກຜູ້ໃຫ້ບໍລິການກໍ່ຄື UnionPay ສາກົນ ທີ່ເປັນຜູ້ນຳການຊຳລະສະສາງລະດັບສາກົນ ແລະ ໃຫ້ບໍລິການທົ່ວໂລກ. ເຊິ່ງຈະເປັນທາງເລືອກໃໝ່ນອກຈາກການນຳໃຊ້ບັດເດບິດ ຫລື ບັດເຄຼດິດ.

ການຮ່ວມມືລະຫວ່າງ ທຄຕລ ແລະ ຢູນຽນເພສາກົນໃນຄັ້ງນີ້ຈະເປັນອີກບາດກ້າວໜຶ່ງທີ່ສຳຄັນໃນການຊ່ວຍຜັກດັນ ບັນດາຮ້ານຄ້າ ແລະ ຫົວໜ່ວຍທຸລະກິດຕ່າງໆ ໃນລາວ ສາມາດດຶງເອົາການຈັບຈ່າຍໃຊ້ສອຍຈາກນັກທ່ອງທ່ຽວຄົນຈີນທີ່ເຂົ້າມາໃນລາວໄດ້ດີຍິ່ງຂຶ້ນ ຍ້ອນມີຊ່ອງທາງການຊຳລະສະທີ່ສະດວກສະບາຍ ເປັນການເປີດໂອກາດໃຫ້ບັນດາຮ້ານຄ້າ ແລະ ຫົວໜ່ວຍທຸລະກິດຕ່າງໆໃຫ້ສາມາດຮັບຊຳລະດ້ວຍລະບົບທັນສະໄໝ ແລະ ມີກຸ່ມລູກຄ້າໃຫຍ່ ເຊິ່ງຈະຊ່ວຍເຮັດໃຫ້ເພີ່ມຍອດຂາຍ ແລະ ທຸລະກິດຂະຫຍາຍຕົວໄດ້ດີຂຶ້ນ ສາມາດສົ່ງເສີມການຄ້າ ແລະ ສະໜັບສະໜູນການຊຳລະເງິນລະຫວ່າງສອງປະເທດ.

ດ້ວຍຕົວເລກຜູ້ຊົມໃຊ້ UnionPay App ທີ່ມີ**ຫລາຍກວ່າ 150 ລ້ານຢູເຊີ**ຈາກທົ່ວປະເທດຈີນ ເຊິ່ງເປັນໜຶ່ງໃນ App ມືຖືທີ່ໄດ້ຮັບຄວາມນິຍົມທີ່ສຸດໃນປະເທດຈີນ ບວກກັບແນວໂນ້ມການເພີ່ມຂຶ້ນຂອງນັກທ່ອງທ່ຽວ ແລະ ນັກທຸລະກິດຊາວຈີນທີ່ເຂົ້າມາໃນປະເທດລາວຢ່າງຕໍ່ເນື່ອງເຊິ່ງມີຫຼາຍກວ່າ 8 ແສນຄົນ/ປີ ແລະ ຈີນແມ່ນເປັນແຫຼ່ງນັກທ່ອງທ່ຽວທີ່ໃຫຍ່ທີ່ສຸດຂອງລາວ ເຊິ່ງໃນປີນີ້ ຍິ່ງເປັນປີທີ່ລາວ-ຈີນມີການຈັດປີທ່ອງທ່ຽວລາວຈີນຍິ່ງຈະເປັນການດຶງດູດເອົານັກທ່ອງທ່ຽວ ແລະ ນັກທຸລະກິດຊາວຈີນ ເຂົ້າມາໃນລາວຫລາຍຍິ່ງຂຶ້ນພ້ອມທັງຮອງຮັບໂຄງການທາງລົດໄຟລາວ-ຈີນທີ່ຄາດວ່າຜູ້ນຳໃຊ້ການຊຳລະສະສາງດ້ວຍ UnionPay QR ກວມອັດຕາສູງ ເຊິ່ງກຸ່ມລູກຄ້າດັ່ງກ່າວແມ່ນມີຄວາມຊິນເຄີຍກັບການດຳເນີນທຸລະກຳຜ່ານລະບົບ UnionPay QR. ການຮ່ວມມືດັ່ງກ່າວຈະຊ່ວຍໃຫ້ພໍ່ຄ້າຊາວຂາຍທ້ອງຖິ່ນໃນລາວສາມາດຕອບສະໜອງໃຫ້ແກ່ນັກທ່ອງທ່ຽວຈີນໄດ້ເປັນຢ່າງດີ.

ຕໍ່ກັບໂອກາດ ແລະ ຄວາມທ້າທາຍດັ່ງກ່າວ BCEL ມີຖານຮ້ານຄ້າສະມາຊິກ QR Code OnePay **ຫລາຍກວ່າ 10.000 ຮ້ານ** ທີ່ພ້ອມຈະຮອງຮັບການໃຫ້ບໍລິການ QR UnionPay ເພື່ອຮັບປະກັນການບໍລິການຊຳລະສະສາງຢູນຽນເພ ໃນຂົງເຂດທົ່ວປະເທດ ແລະ ຍັງຈະສືບຕໍ່ຂະຫຍາຍການບໍລິການເພີ່ມຂຶ້ນເລື້ອຍໆ.

ໃນຍຸກແຫ່ງການພັດທະນາທີ່ເທັກໂນໂລຢີມີຄວາມກ້າວໜ້າສູງ ແລະ ເພື່ອການທັນເປັນດິຈິຕອນຂອງອຸດສະຫະກຳການຊຳລະສະສາງຂອງລາວ ທຄຕລ ຈະສືບຕໍ່ພັດທະນາຜະລິດຕະພັນ ແລະ ການບໍລິການຢ່າງບໍ່ຢຸດຢັ້ງ ໂດຍທຸກຜະລິດຕະພັນ ແລະ ການບໍລິການ ທຄຕລ ແມ່ນເນັ້ນຄວາມທັນສະໄໝ, ສະດວກສະບາຍ, ມີຄວາມປອດໄພ ກວດສອບໄດ້ ແລະ ໄດ້ມາດຕະຖານສາກົນ ເພື່ອນຳສະເໜີບໍລິການທາງການເງິນທີ່ຫຼາກຫຼາຍ ທັນສະໄໝ ຕອບສະໜອງຄວາມຕ້ອງການຂອງລູກຄ້າ ບົນພື້ນຖານຄວາມຮັບຜິດຊອບສູງຕໍ່ສັງຄົມ, ເພື່ອໃຫ້ລູກຄ້າ ແລະ ສັງຄົມໄດ້ຮັບປະໂຫຍດສູງສຸດ.


ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ທັນສະໄໝ ວ່ອງໄວ ໝັ້ນໃຈ
Call center: **1555**, Facebook: BCEL Bank,

Website: www.bcel.com.la

ຂຽນຂ່າວໂດຍ: ນາງ ສຸກສາຄອນ ບຸນສະຫວັດທິພັນ, ພະແນກການຕະຫຼາດ


